ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 4665 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 22 NOV 2023

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຂັ້ນສູງທ່າງ່ອນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ: ເຂົ້າຮ່ວມສະໝັກທຶນຝຶກອົບຮົມ ໄລຍະສັ້ນ ພາຍໃຕ້ໂຄງການ Indian Technical and Economic Cooperation (ITEC) ສຳລັບປີ 2023-2024.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ຈົດໝາຍທາງການຈາກສະຖານທູດ ອິນເດຍ ປະຈຳ ສປປ ລາວ ສະບັບເລກທີ Vient/381/2023 ແລະ ສະບັບເລກທີ Vient/383/2023, ລົງວັນທີ 25 ຕຸລາ 2023;
- ອີງຕາມ ສະໂນດນຳສົ່ງ ຈາກຫ້ອງການ, ກະຊວງການຕ່າງປະເທດ ສະບັບເລກທີ 2270/ຫກ.ອປອ, ລົງວັນທີ 07 ພະຈິກ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນຝຶກອົບຮົມໄລຍະສັ້ນ ພາຍໃຕ້ໂຄງການ Indian Technical and Economic Cooperation (ITEC) ສຳລັບປີ 2023-2024.

ສຳລັບຮູບແບບການສະໝັກແມ່ນໃຫ້ສະໝັກຜ່ານລະບົບອອນລາຍໂດຍຜ່ານທາງເວັບໄຊ https://www.itecgoi.in/upcoming_courses ພາຍຫຼັງສະໝັກຜ່ານທາງເວັບໄຊ ແລ້ວໃຫ້ສຳເນົາ, ສະແກນສົ່ງໃຫ້ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວນລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ທ. ສົມເພັດອຸດອນດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ